ສະມາຄົມເພື່ອການສະໜັບສະໜູນ ແລະ ປັບປຸງຊົນນະບົດ (ສພປ)

ສພປ/ARMI

ASSOCIATION FOR RURAL MOBILISATION AND IMPROVEMENT (ARMI)

ຖະໜົນວິໄລ, ເຮືອນເລກທີ 046/05 ບ້ານ ສຸນັນທາ, ນະຄອນໄກສອນພົມວິຫານ, ແຂວງສະຫວັນນະເຂດ ຕູ້ ປ.ນ.1133 Vilay Road, House No 046/05 Sounantha village, Kaisone Phomvihan City, Savannakhet province, Laos P.O Box: 1133 Tel/Fax: +856-41-252717, Email: info@armi.la website: www.armi.la


# ປະກາດຮັບສະໝັກພະນັກງານ

**ຕຳແໜ່ງ:** ພະນັກງານ 5 ຕຳແໜ່ງ

**ໄລຍະເວລາສັນຍາ:** ປີຕໍ່ປີ

**ລາຍງານເຖິງ:** ຜູ້ປະສານງານໂຄງການ

**ບ່ອນປະຈຳການ:** ເມືອງ ລະມາມ, ເມືອງ ດາກຈຶງ ແຂວງເຊກອງ

**ປິດຮັບສະໝັກ:** 30 ກັນຍາ 2023 (17:00 ໂມງ)

**ສະມາຄົມພວກເຮົາມີຄວາມຕ້ອງການເພື່ອນຮ່ວມງານ ລາຍລະອຽດດັ່ງລຸ່ມນີ້:**

1. **ຕຳແໜ່ງວິຊາການດ້ານສຸຂະພາບແມ່ ແລະ ເດັກ 3 ຕຳແໜ່ງ (2 ຕຳແໜ່ງປະຈຳຢູ່ເມືອງລະມາມ ແລະ 1 ຕຳແໜ່ງປະຈຳຢູ່ເມືອງດາກຈຶງ ແຂວງ ເຊກອງ):** ມີໜ້າທີ່ໃນການຈັດຕັ້ງປະຕິບັດ, ຕິດຕາມ ແລະ ສະໜັບສະໜູນກິດຈະກຳຕ່າງໆຂອງໂຄງການ ຢູ່ເມືອງລະມາມ ແລະ ເມືອງດາກຈຶງ ແຂວງເຊກອງ. ປະສານງານໂດຍກົງກັບອາສາສະໝັກສາທາລະນະສຸກບ້ານ, ເພື່ອນຮ່ວມງານ, ສະຫະພັນແມ່ຍິງຂັ້ນເມືອງ, ສຸກສາລາ, ຫ້ອງການສາທາເມືອງ ແລະ ພາກສ່ວນທີ່ກ່ຽວຂ້ອງ. ເກັບກຳ, ວິເຄາະ ແລະ ລາຍງານຂໍ້ມູນ, ຜົນໄດ້ຮັບ ແລະ ອື່ນໆ.
2. **ຕຳແໜ່ງຜູ້ຊ່ວຍການເງິນ ແລະ ບໍລິຫານ 2 ຕຳແໜ່ງ (1 ຕຳແໜ່ງປະຈຳນະຄອນຫຼວງວຽງຈັນ, 1 ຕຳແໜ່ງປະຈຳຢູ່ ແຂວງ ເຊກອງ):** ຊ່ວຍວຽກການເງິນ ແລະ ບໍລິຫານເພື່ອຮັບປະກັນການຄຸ້ມຄອງຊັບພະຍາກອນທາງດ້ານການເງິນຢ່າງມີປະສິດທິພາບຕາມຂັ້ນຕອນຂອງໂຄງການ. ຊ່ວຍໃນການປະຕິບັດຕາມລະບຽບ ແລະ ນະໂຍບາຍຂອງການເງິນ ແລະ ບໍລິຫານ ໂດຍສະເພາະການລົງບັນຊີປະຈຳວັນ. ປະສານສົມທົບກັບຜູ້ປະສານງານຂັ້ນແຂວງ ແລະ ລາຍງານໃຫ້ຫົວໜ້າການເງິນ ແລະ ບໍລິຫານຢ່າງເປັນປະຈຳ.

**ເງື່ອນໄຂຜູ້ສະໝັກ:**

- ສຳລັບຕຳແໜ່ງວິຊາການດ້ານສຸຂະພາບແມ່ ແລະ ເດັກ ຈົບຊັ້ນສູງຂຶ້ນໄປ ຫຼື ມີປະສົບການທີ່ກ່ຽວຂ້ອງກັບວຽກງານແມ່ ແລະ ເດັກໃນເຂດຊົນນະບົດຢ່າງ ໜ້ອຍ 01 ປີຂຶ້ນໄປ;
- ສຳລັບຕຳແໜ່ງຜູ້ຊ່ວຍການເງິນ ແລະ ບໍລິຫານ ຈົບໃນລະດັບຊັ້ນສູງຂຶ້ນໄປ ຫຼື ມີປະສົບການກ່ຽວກັບການເງິນ ແລະ ບໍລິຫານ;
- ມີທັກສະຄອມພິວເຕີໃນລະດັບພື້ນຖານ ແລະ ສາມາດນຳໃຊ້ໂປຣແກຣມໄດ້ເຊັ່ນ: Word, Excel, PowerPoint, Outlook, Email ແລະ ອື່ນໆ;
- ສັນຊາດລາວ ອາຍຸບໍ່ເກີນ 35 ປີ, ມີທັກສະຂອງການເຮັດວຽກເປັນທີມທີ່ດີ, ເປັນເຈົ້າການ, ມີຈິດອາສາ, ອັດທະຍາໄສດີ, ມີທັກສະການສື່ສານ, ມີຄວາມມຸ່ງໝັ້ນໃນການເຮັດວຽກ, ມັກຮຽນຮູ້ສິ່ງໃໝ່ໆ ແລະ ມີຄວາມໝັ້ນໃຈ;
- ເປັນຄົນພື້ນທີ່ແຂວງ ເຊກອງ (ໂດຍສະເພາະເມືອງດາກຈຶງ ແລະ ເມືອງລະມາມ) ແລະ ຖ້າສາມາດເວົ້າພາສາເຜົ່າຕະຣຽງ, ກະຕູ່ ແລະ ແຢ ຈະພິຈາລະນາເປັນພິເສດ.

**ຂໍ້ມູນໃນການສະໝັກ:**

ທ່ານໃດທີ່ມີຄວາມສົນໃຈ ແມ່ນສາມາດສົ່ງຈົດໝາຍສະໝັກວຽກ (Cover Letter) ແລະ ຊີວະປະຫວັດຫຍໍ້ (CV) ມາໄດ້ທີ່ອີເມວ souvanny@armi.la ແລະ info@armi.la ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບພວກເຮົາແມ່ນເບິ່ງໄດ້ທີ່ www.armi.la.